ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 01 ຫາ 05 ມັງກອນ 2024



ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວ ກະກຽມງານສະເຫຼີມສະຫຼອງ 30 ປີ ແລະ ງານຕະຫຼາດນັດ ໃນລະຫວ່າງ ວັນທີ 12-14 ມັງກອນ 2024

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊອນ ຫ້ວຍຊ້ວ ກະກຽມງານສະເຫຼີມສະຫຼອງ 30 ປີ ແລະ ງານຕະຫຼາດນັດ ໃນລະຫວ່າງວັນທີ 12-14 ມັງກອນ 2024

ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊ້ວ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ແມ່ນສູນໜຶ່ງ ທີ່ສ້າງຂຶ້ນບົນເນື້ອໃນຈິດໃຈຂອງສອງປະມຸກລັດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຣາຊະອານາຈັກໄທ ໃນວັນທີ 08 ເມສາ ປີ 1994. ມີສະຖານທີ່ຕັ້ງຢູ່ ບ້ານ ນາຍາງ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ. ສູນດັ່ງກ່າວໄດ້ເປັນສັນຍາລັກແຫ່ງການຮ່ວມມື ທາງດ້ານວິຊາການກ່ຽວກັບວຽກງານກະສິກຳ ຂອງ 02 ຊາດ ລາວ-ໄທ, ເຊິ່ງມີຈຸດປະສົງເພື່ອເສີມສ້າງສາຍພົວພັນ ການຮ່ວມມື, ແລກປ່ຽນ ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຖານບ້ານໃກ້ເຮືອນຄຽງ ບ້ານພີ່ ເມືອງນ້ອງ ທີ່ມີມາແຕ່ດົນນານນັ້ນໃຫ້ເກີດດອກອອກຜົນຍິ່ງໆຂຶ້ນເວົ້າລວມເວົ້າສະເພາະແມ່ນການບໍລິການເຕັກນິກກະສິກຳດ້ວຍການນຳເອົາບົດຮຽນຜົນສຳເລັດຕົວຈິງໃນການພັດທະນາເຕັກນິກ, ເຕັກໂນໂລຊີດ້ານກະສິກຳຂອງຣາຊະອານາຈັກໄທ ມາສາທິດ ຖ່າຍທອດ ທາງດ້ານທິດສະດີ ແລະ ພາກປະຕິບັດຕົວຈິງກັບທີ່ ໃຫ້ນັກວິຊາການ, ຊາວກະສິກອນ, ຜູ້ປະກອບການ ແລະ ນັກຮຽນ-ນັກສຶກສາ ໃນ ສປປ ລາວ.

ເນື່ອງໃນໂອກາດ ຄົບຮອບ 30 ປີ ໃນການສ້າງຕັ້ງສູນແຫ່ງນີ້, ຂໍເຊີນຊວນບັນດາທ່ານ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ຊາວກະສິກອນ, ນັກທຸລະກິດ ເຂົ້າຮ່ວມສະເຫຼີມສະຫຼອງງານດັ່ງກ່າວ ເຊິ່ງໃນງານນີ້ຈະມີກິດຈະກຳການສຳມະນາດ້ານວິຊາການຫຼາຍຫົວຂໍ້ເຊັ່ນ: ການບໍລິຫານຈັດການກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ, ວຽກງານພັດທະນາການລ້ຽງສັດ, ວຽກງານປະມົງ ແລະ ວຽກງານພັດທະນາທີ່ດິນ ນຳສະເໜີໂດຍທີມງານຝ່າຍລາວ ແລະ ຝ່າຍໄທ ພ້ອມນີ້ ກໍຈະມີການວາງສະແດງ, ຈຳໜ່າຍຜົນຜະລິດ ແລະ ຜະລິດຕະພັນກະສິກຳລາວ ທີ່ຫຼາກຫຼາຍ ຈາກບັນດາກິດຈະກຳການຜະລິດຂອງສູນ, ຄອບຄົວຕົວແບບ, ບັນດາທຸລະກິດດ້ານກະສິກຳ ທີ່ມາຈາກໝູ່ບ້ານອ້ອມຂ້າງສູນ ແລະ ຜູ້ປະກອບການດ້ານກະສິກຳຕ່າງໆ ໃຫ້ບັນດາທ່ານໄດ້ຢ້ຽມຊົມ, ຮຽນຮູ້ ແລະ ເລືອກຊື້. ງານດັ່ງກ່າວຈະຈັດຂຶ້ນໃນລະຫວ່າງວັນທີ 12-14 ມັງກອນ 2024 ນີ້ ທີ່ສູນພັດທະນາ ແລະ






โครงการร่วมมือลาว-ไทย

ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວ ບ້ານນາຍາງ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ.

ສຳລັບວາລະການສຳມະນາ ຈະຈັດຂຶ້ນໃນວັນທີ 13 ມັງກອນ 2024 ເວລາ 8:30-16:30 ໂມງ, ຜູ້ສົນໃຈສາມາດແຈ້ງລົງທະບຽນເຂົ້າຮ່ວມຮັບຟັງການສຳມະນາໄດ້ທີ່ໜ້າງານ ຫຼື ລົງທະບຽນຜ່ານທາງອອນລາຍ https://forms.gle/kgK-3bjTZXLEFs6tv8 ສອບຖາມເພີ່ມຕື່ມໄດ້ທີ່ 020 5827 4699 ນ. ພອນພຸດ ວົງມະນີ ຮອງຊະແໜງສົ່ງເສີມ-ຝຶກອົບຮົມ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;